ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກໍາມະການຄຸ້ມຄອງຫຼັກຊັບ

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ

ເລກທີ0076 /ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 27 ພະຈິກ 2019

# ແຈ້ງການ

**ເຖິງ:** ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ແຈ້ງລາຍຊື່ບໍລິສັດ ທີ່ໄດ້ຮັບອະນຸຍາດໃຫ້ອອກຈໍາໜ່າຍຫຼັກຊັບ ເພື່ອລະດົມທຶນຈາກມວນຊົນ ແລະ ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ.

- ອີງຕາມຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 013/ຄຄຊ, ລົງວັນທີ 17 ທັນວາ 2013;
- ອີງຕາມຂໍ້ຕົກລົງວ່າດ້ວຍ ການອອກຈໍາໜ່າຍຮຸ້ນ ສະບັບເລກທີ 05/ຄຄຊ, ລົງວັນທີ 28 ມັງກອນ 2019.

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຂໍຖືເປັນກຽດແຈ້ງມາຍັງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນຂອບເຂດທົ່ວປະເທດ ຊາບທົ່ວເຖິງກັນວ່າ ມາຮອດປັດຈຸບັນ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໄດ້ອະນຸຍາດໃຫ້ 11 ບໍລິສັດ ທີ່ລະດົມທຶນຈາກມວນຊົນ ແລະ ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ ຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຊຶ່ງລາຍລະອຽດມີດັ່ງ ລຸ່ມນີ້:

1. **ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ** (EDL Generation Public Company);
   ໂທລະສັບ: 021 316142.
2. **ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ** (BANQUE POUR LE COMMERCE EXTERIEUR LAO PUBLIC);
   ໂທລະສັບ: 021 213200.
3. **ບໍລິສັດ ລາວເວີນ ມະຫາຊົນ** (LAO WORLD PUBLIC COMPANY);
   ໂທລະສັບ: 021 415477.
4. **ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ** (Petroleum Trading Lao Public Company);
   ໂທລະສັບ: 021 264834 ແລະ 021 264836.
5. **ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ** (Souvanny Home Center Public Company);
   ໂທລະສັບ: 021 415645.
6. **ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ** (Phousy Construction and Development Public Company);
   ໂທລະສັບ: 021 265394.

7. **ບໍລິສັດ ຊີມັງລາວ ມະຫາຊົນ** (Lao Cement Public Company);
   ໂທລະສັບ: 021 412111 ແລະ 021 451116.
8. **ບໍລິສັດ ມະຫາທຶນ ເຊົ່າສິນເຊື່ອ ມະຫາຊົນ** (Mahathuen Leasing Public Company);
   ໂທລະສັບ: 021 418062-6.
9. **ບໍລິສັດ ລາວອາໂກຣເທັກ ມະຫາຊົນ** (Lao Agrotech Public Company);
   ໂທລະສັບ: 021 520715.
10. **ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ** (Vientiane Center Lao Public Company);
    ໂທລະສັບ: 021 288299.
11. **ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ** (Lao ASEAN Leasing Public Company).
    ໂທລະສັບ: 021 410551.

ສ່ວນບໍລິສັດອື່ນນອກເໜືອຈາກນີ້ ຫາກມີການລະດົມທຶນຈາກມວນຊົນ ດ້ວຍການອອກຈໍາໜ່າຍ ຮຸ້ນ ແລະ/ຫຼື ຮຸ້ນກູ້ ຖືວ່າເປັນການລະດົມທຶນທີ່ບໍ່ໄດ້ຮັບອະນຸຍາດຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ເປັນການລະເມີດລະບຽບກົດໝາຍ ກ່ຽວກັບວຽກງານຫຼັກຊັບຂອງ ສປປ ລາວ. ກໍລະນີຫາກທ່ານພົບເຫັນການລະດົມທຶນທີ່ບໍ່ຖືກຕ້ອງ ກະລຸນາແຈ້ງມາທີ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ **ໂທລະສັບ: 021 217891 ຫຼື ໝາຍເລກສາຍດ່ວນ: 1602** ໃນໂມງລັດຖະການ.

ແຈ້ງການສະບັບນີ້ນໍາໃຊ້ປ່ຽນແທນ ແຈ້ງການເລື່ອງ ແຈ້ງລາຍຊື່ບໍລິສັດທີ່ໄດ້ຮັບອະນຸຍາດໃຫ້ອອກຈໍາໜ່າຍຫຼັກຊັບ ເພື່ອລະດົມທຶນຈາກມວນຊົນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ ສະບັບເລກທີ 0023/ສຄຄຊ, ລົງວັນທີ 19 ສິງຫາ 2016.

ໃນຕໍ່ໜ້າຖ້າຫາກວ່າມີຈໍານວນ ບໍລິສັດທີ່ໄດ້ຮັບອະນຸຍາດໃຫ້ລະດົມທຶນ ແລະ ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ ເພີ່ມຂຶ້ນ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຈະອອກແຈ້ງການເພີ່ມເຕີມ ເປັນແຕ່ລະໄລຍະ.

ດັ່ງນັ້ນ, ຈຶ່ງໄດ້ແຈ້ງມາຍັງທ່ານ ເພື່ອຊາບຕາມເນື້ອໃນຂອງແຈ້ງການສະບັບນີ້ດ້ວຍ.

**ຫົວໜ້າສໍານັກງານ**

ຄະນະກໍາມະການຄຸ້ມຄອງຫຼັກຊັບ ສໍານັກງານ ຄຄຊ

**ສາຍສະໝອນ ຈັນທະຈັກ**